Translation/Lao

# APIASF

## ມູນຄວາມຈິງ

## ຄວາມເປັນມາ

- ທຶນການສຶກສາເພື່ອຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊິຟິກໄດ້ຈັດຕັ້ງຂຶ້ນ ໂດຍຜູ້ນຳແຫ່ງກຸ່ມບໍລິສັດ ແລະປະຊາຄົມລະວ່າງຊາດ ໂດຍມີວັດຖຸປະສົງ ເພື່ອໃຫ້ພວກຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊິຟິກມີອົງການ ໃຫ້ທຶນການສຶກສາລະວ່າງຊາດ ທີ່ຕັ້ງເປົ້າໝາຍອັນແທ້ຈິງເພື່ອຄວາມຕ້ອງການຕ່າງໆສຳຫລັບການສຶກສາໂດຍສະເພາະໃນປະຊາຄົມຂອງພວກເຂົາເຈົ້າ
- ທຶນການສຶກສາເພື່ອຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊິຟິກ ຫລື **APIASF** ຍັງໄດ້ສະນັບສະນຸນໂດຍໂຄງການໃຫ້ທຶນການສຶກສາອື່ນໆ ເຊັ່ນ ອົງການທຶນການສຶກສາຣີສແປນິກ ອົງການທຶນການສຶກສາຢູໃນເທັດນີໂກຣ ສູນກາງ ທຶນການສຶກສາຊາວອະເມລິກັນອິນດຽນ ແລະກອງທຶນການສຶກສາເກດມິນເລນນຽມ.

## ເຫດຜົນຂອງຄວາມຕ້ອງການ

- ອີງຕາມຜົນການສຳລວດປະຊາກອນປະຈຳປີ 2000 ຂອງສະຫະຣັຖ ພົບວ່າ ມີຊາວອະເມລິກັນເອເຊັຍ 12.6 % ຊາວອະເມລິກັນຮາວາຍ ແລະໝູ່ເກາະມະຫາສະມຸດແປຊິຟິກ 17.7% ມີຄວາມເປັນຢູ່ ຕ່ຳກວ່າລະດັບຄວາມຍາກຈົນ ທີ່ກຳນົດໄວ້ໂດຍທາງການ
- ເຖິງແມ່ນວ່າ ຈະມີຊາວອະເມລິກັນເອເຊັຍ ເຖິງ 44% ກໍຕາມທີ່ໄດ້ສຳເຣັດການສຶກສາຂັ້ນປະຣິນຍາຕຣີ ຖ້າຈະປຽບທຽບກັບຊາວອະເມລິກັນທັງໝົດ ທີ່ມີພຽງ 26% ຖ້າຄິດສະເລັ່ຍແລ້ວ ພວກຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດ ແປຊິຟິກ ທີ່ສຳເຣັດການສຶກສາຂັ້ນປະຣິນຍາຕຣີນັ້ນ ຍັງມີເປີເຊັນໜ້ອຍຫລາຍ ອີງຕາມຜົນການສຳລວດປະຊາກອນປະຈຳປີ 2000 ຂອງສະຫະຣັຖ ພົບວ່າຊາວ ລາວເຜົ່າມົ້ງ ມີ7.4%, ຊາວຂະເມນ ມີ9.1%, ຊາວວຽດນາມ 19.5% ຊາວພື້ນ ເມືອງຮາວາຍ ມີ 16.5% ແລະຊາວໝູ່ເກາະອື່ນ ອາຍຸ 25ປີຂື້ນໄປ ສຳເລັດການສຶກສາຂັ້ນປະຣິນຍາຕຣີ ຫລືສູງກວ່າ
- ບັນດາບໍລິສັດສຳຄັນຕ່າງໆ ຢາກໃຫ້ມີ ຫລືສ້າງຕັ້ງທຶນການສຶກສາເພື່ອອົງການ ແພນ-ເອພີໄອເອ ມາເປັນເວລາຫລາຍປີແລ້ວ ຊຶ່ງນັບຕັ້ງແຕ່ບໍລິສັດເຫລົ່ານັ້ນໄດ້ປິດລົງໄປ ຈຶ່ງເປັນເຫດໃຫ້ພວກທີ່ຈະໃຫ້ທຶນການສຶກສາກ້ອນໃຫຍ່ໆ ທີ່ຄວນຈະຖືກແຈກ

ຝ່າຍໃຫ້ແກ່ຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊີຟິກນັ້ນ ຕ້ອງສູນເສັຍໄປພ້ອມກັນ

## ການຕັ້ງຊື່

- ໂຄງການທຶນການສຶກສາ ຈະໃຫ້ຊື່ວ່າ ທຶນການສຶກສາເພື່ອຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊີຟິກ ຫລື **APIASF**
- ຊື່ຂອງເຄືອຂ່າຍອິນເທີເນັທ ຫລື ເວັບໄຊ້ ແມ່ນ: **www.apiasf.org**

## ທີ່ຕັ້ງສູນກາງ

- **APIASF** ມີຖານຕັ້ງຢູ່ກຸງວໍຊິງຕັນ ດີຊີ
- **APIASF** ຈະຕັ້ງໜ່ວຍບໍລິຫານ ທີ່ກຸງວໍຊິງຕັນ ດີຊີ
- ຈະມີການເປີດສາຂາ ຂື້ນ ໃນຕົວເມືອງໃຫຍ່ໆ ທີ່ມີປະຊາຊົນຊາວອະເມລິກັນເອເຊັຍ ແລະໝູ່ເກາະມະຫາສະມຸດແປຊີຟິກ ຢູ່ຢ່າງຫລວງຫລາຍ

## ຄວາມມຸ້ງຫວັງ

- ຄວາມມຸ້ງຫວັງອັນແທ້ຈິງຂອງພວກເຮົານັ້ນ ແມ່ນຢາກຈະເຫັນຊາວອະເມລິກັນເອເຊັຍທັງຫລາຍ ຜູ້ທີ່ມີຄວາມໃຝ່ຝັນຢາກປະສົບຜົນສຳເຣັດໃນການສຶກສາເຖິງຂັ້ນສູງ ໂດຍບໍ່ຖືຊັ້ນ ວັນນະ ຫລືມີຄວາມທຸກຍາກຂັດສົນນັ້ນ ແຕ່ປະການໃດ.

## ຖະແລງການຂອງການດຳເນີນງານ

- ເພື່ອສ້າງພື້ນຖານອັນໝັ້ນຄົງ ແກ່ອົງການທີ່ປະສານງານຮ່ວມ ໃນການຊຸກຍູ້ໂຄງການໃຫ້ທຶນການສຶກສາລະວ່າງຊາດ ທີ່ສະນັບສະນູນ ແລະຊັກຊວນ ພວກນັກສຶກສາຊາວເອເຊັຍ ເພື່ອສຶກສາ ພ້ອມດຽວກັນ ກໍພັທະນາຜູ້ນຳໃນອະນາຄົດ ຜູ້ພ້ອມທີ່ຈະອຸທິດຕົນໃຫ້ເປັນປະໂຍດແກ່ປະຊາຄົມຂອງເຂົາເຈົ້າພາຍຫລັງຕໍ່ມາ ແລະສ້າງຄວາມໝັ້ນຄົງຖາວອນແກ່ອະເມລິກາ ຢ່າງແທ້ຈິງຕລອດໄປ

## ແນວທາງທີ່ຈຳນຳໄປສູ່ຄວາມສຳເລັດຜົນ

- ເພື່ອຊຸກຍູ້ໃຫ້ການສຶກສາ ເປັນນຶ່ງໃນສາມປັດຈັຍອັນລ້ຳຄ່າ ຂອງຊາວອະເມລິກັນເອເຊັຍ

ແລະໝູ່ເກາະແຖບມະຫາສະມຸດແປຊິຟິກ

- ອົງການທຶນການສຶກສາ ຣິສແພນິກ ແລະ ຢູໄນເທັດນີໂກຣ ໄດ້ຖືກສະໜັບສະໜຸນຈາກຫລາຍກວ່າ 100 ບໍລິສັດ ແລະພ້ອມດຽວກັນ ອົງການທຶນການສຶກສາ ພ້ອມກັບພວກບໍລິສັດດັ່ງກ່າວຈະສາມາດສະໜັບສະໜຸນອົງການທຶນການສຶກສາລະວ່າງຊາດ ທີ່ຜູກພັນກັບພວກນັກສຶກສາຊາວອະເມລິກັນເອເຊັຍ ແລະໝູ່ເກາະມະຫາສະມຸດແປຊິຟິກ
- ສະມາຄົມ The Asian McDonald's Operator ພ້ອມກັບນ່ວຍບໍລິຈາກ McRonald McDonald House Charities ເຄີຍເປັນຜູ້ບໍລິຫານໂຄງການໃຫ້ທຶນການສຶກສາ ມາເປັນເວລາຫລາຍສິບປີ ແລະມີປະສົບການໃນການຫາເງິນເຂົ້າອົງການ ແລະເຂົ້າເຖິງຊຸມຊົນໄດ້ເປັນຢ່າງດີ
- ສະມາຊິກບໍລິຫານອົງການຕ່າງໆຂອງຊາວອະເມລິກັນເອເຊັຍ ແລະໝູ່ເກາະມະຫາສະມຸດແປຊິຟິກ ທີ່ເປັນກັມມະການປຶກສາ ໃຫ້ແກ່ອົງການທຶນການສຶກສາ ເກດ ມິລເລັນນຽມ ທີ່ບໍລິຫານໂດຍອົງການຂອງຊາວຈີນອະເມລິກັນນັ້ນ ມີປະສົບການມາຫລາຍປີເຊັ່ນກັນ

## <u>ບັນດາອົງການໃຫ້ການສະໜັບສະໜຸນແຕ່ແລກເລີ່ມ</u>

- ກັມມະການທີ່ປຶກສາ ຈາກອົງການຕ່າງໆຂອງຊາວອະເມລິກັນເອເຊັຍ ແລະໝູ່ເກາະແຖບມະຫາສະມຸດແປຊິຟິກ ສຳລັບໂຄງການທຶນການສຶກສາ ເກດ ມິລເລັນນຽມ ນັ້ນ ປະກອບດ້ວຍອົງການດັ່ງຕໍ່ລົງໄປນີ້:
    - ອົງການ Asian Pacific American Institute for Congressional Studies.
    - ອົງການ ຊາວຈີນອະເມລິກັນ
    - ອົງການ Southeast Asia Resource Action Center.
    - ມະຫາວິທະຍາລັຍແຫ່ງປະຊາຄົມຊາວພື້ນເມືອງຮາວາຍ
- ສະມາຄົມ Asian McDonald's Operators Association.
- ບໍລິສັດນ້ຳອັດລົມ ໂຄຄາ ໂຄລ້າ
- ອະດີດຜູ້ແທນຮາສດອນສະຫະຣັຖ ທ່ານ ໂຣເບີທ ອັນເດີວູດ
- ບໍລິສັດ ແມກດາໂນລດ໌
- ອົງການທຶນການສຶກສາ United Negro College Fund
- ອົງການທຶນການສຶກສາ UniHispanic Scholaship fund
- ສູນກາງທຶນການສຶກສາ American Indian Graduate Center Scholars

<u>ກຳມະການທີ່ປຶກສາໂຄງການຂັ້ນເລີ່ມຕົ້ນ</u>

- ບັນດາອົງການໃນປະຊາຄົມ ເຊັ່ນອົງການຈີນອະເມລິກັນ ຫລື OCA ໃນນາມອົງການ ຕົວເດັ່ນ ທີ່ມີບົດບາດສຳຄັນໄດ້ເຂົ້າຮ່ວມກັບອົງການ ເກດ ມິລເລັນນຽມ ພ້ອມດ້ວຍອົງການ ເຊັຍຣັກ (SEARAC) ແລະອົງການອື່ນໆຕາງໜ້າປະຊາຄົມຂອງຊາວເກາະແຖບມະຫາ ສະມຸດແປຊີຟິກ ຊຶ່ງເປັນສອງອົງການທີ່ບໍ່ມີການຕ່າງໜ້າຢູ່ໃນຣະດັບທີ່ສຸດຂອງປະຊາຄົມ ຊາວເອເຊັຍ ແລະໝູ່ເກາະມະຫາແປຊີຟິກ ທີ່ຮ່ວມຢູ່ໃນຄະນະກັມມະການບໍລິຫານມາ ຕໍ່າກວ່າ 10 ປີ
- ຄະນະສະມາຊິກກັມມະການບໍລິຫານ ຈະປະກອບດ້ວຍສະມາຊິກບໍ່ຕໍ່າກວ່າ 11 ຄົນ ແລະບໍ່ ໃຫ້ເກີນ 25 ຄົນ ດັ່ງທີ່ໄດ້ບົ່ງໄວ້ໃນທັມມະນູນຂອງອົງການ
- ຄະນະກັມມະການບໍລິຫານ ຈະຕຽມການເປັນຜູ້ຕາງໜ້າຊຸມຊົນທົ່ວໄປພາຍໃນປະຊາຄົມ ພ້ອມທັງໃຫ້ຄວາມສະດວກດ້ານຕ່າງໆແກ່ປະຊາຄົມນຳອີກ

<u>ເລີ່ມປະຕິບັດໂຄງການ</u>

- ໂຄງການເລີ່ມຕົ້ນໃນ ລະດູໜາວ ຣະດູໃບໄມ້ປົ່ງ ຂອງປີ 2004
- ເລີ່ມຕົ້ນຂັ້ນແລກ ໃນຕົວເມືອງທີ່ມີປະຊາຄົມ  ເຊັ່ນ ເມືອງ Alos Angeles, San Francisco, New York, Atlanta, Chicago, Honolulu, Minneapolis/St. Paul, Boston, charlotte, Seattle, Houston, and Washington, DC
- ລາຍການເປີດໂຄງການ ຈະປະກອບດ້ວຍ ການກິນລ້ຽງຕ້ອນຮັບ ໃນພາກສ່ວນ ປະຊາຄົມ ພົລເຮືອນ ແລະຣັຖະບານ ແລະຖະແລງການກ່ຽວກັບໂຄງການຕໍ່ສື່ມວນຊົນ
- ການຫາເງິນລາຍໄດ້ ແລະຊອກຫາພາກສ່ວນສະນັບສະນຸນຂ້າງນອກ ຈະຈັດໃຫ້ມີຂຶ້ນໃນ ລະວ່າງ ປີ 2003 - 2004
- ການມອບທຶນການສຶກສາແຫ່ງຊາດລຸ້ນແລກ ຈະເລີ່ມຂຶ້ນເມື່ອ ປີ 2005

**ເປົ້າໝາຍການຫາເງິນລາຍໄດ້**

- ຫາລາຍໄດ້ ໃຫ້ໄດ້ຈຳນວນ ສາມລ້ານໂດລາ ໃນປີ 2005